# ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

**VOTE 2016**

## *ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

ນາຍຈ້າງຂອງທ່ານຕ້ອງຈ່າຍຄ່າຈ້າງໃຫ້ທ່ານໃນເວລາທີ່ທ່ານໄປລົງຄະແນນສຽງ ຖ້າວ່າມັນເປັນເວລາເຮັດວຽກຂອງທ່ານ ນາຍຈ້າງຂອງທ່ານບໍ່ສາມາດຮຽກຮ້ອງໃຫ້ທ່ານໃຊ້ເວລາພັກຜ່ອນສ່ວນບຸກຄົນຫຼືເວລາພັກຮ້ອນຂອງທ່ານ

ໃຫ້ທ່ານໃຊ້ເວລາພຽງແຕ່ໄປລົງຄະແນນສຽງເທົ່ານັ້ນແລ້ວກັບຄືນໄປເຮັດວຽກ

ນາຍຈ້າງຂອງທ່ານບໍ່ສາມາດປະຕິເສດ,ຈຳກັດ, ຫຼືແຊກແຊງສິດນີ້ໂດຍກົງຫຼືໂດຍທາງອ້ອມ ລວມທັງເວລາໃດທີ່ທ່ານເລືອກທີ່ຈະໄປລົງຄະແນນສຽງ

ນາຍຈ້າງຂອງທ່ານສາມາດຂໍໃຫ້ທ່ານແຈ້ງເຂົາເຈົ້າເວລາທີ່ທ່ານຈະໄປ ແລະຂໍໃຫ້ພະນັກງານປະສານງານການຂາດງານຂອງພວກເຂົາເຈົ້າ ເພື່ອຫຼຸດຜ່ອນຜົນກະທົບໃນການເຊົາເຮັດວຽກ

ທ່ານມີສິດທີ່ຈະຢຸດເຮັດວຽກເພື່ອໄປລົງຄະແນນສຽງ ໃນການເລືອກຕັ້ງຂອງລັດແລະລັດຖະບານກາງທັງໝົດແລະໃນການເລືອກຕັ້ງປະຈຳທ້ອງຖິ່ນທັງໝົດທີ່ກຳນົດໄວ້

### *ວັນທີຂອງປີ 2016*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 9 ສິງຫາ*

***ລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼືດ້ວຍຕົວເອງວັນທີ 23 ກັນຍາ ເຖິງ 7 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 18 ຕຸລາ ເພື່ອຊ່ວຍປະຢັດເວລາໃນວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ8 ເດືອນພຶດສະຈິກາ*

## *ການຮ້ອງທຸກ*

ນາຍຈ້າງທີ່ລະເມີດກົດໝາຍນີ້ແມ່ນມີຄວາມຜິດອາຍາຖານເບົາ ທຸກໆຄຳຮ້ອງທຸກຈາກພະນັກງານຄວນຍື່ນໃຫ້ທະນາຍຄວາມຂອງຄາວຕີ້

ມີຕໍ່ຂ້າງຫລັງ...

*ສຳນັກງານລັດຖະມົນຕີ ລັດມິນນິໂຊຕາ*
*mnvotes.org • 1-877-600-VOTE*

# ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

VOTE 2016

...ສືບຕໍ່ຈາກຂ້າງໜ້າ

## *ລົງຄະແນນສຽງໃນບໍ່ຊ້ານີ້ໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນເລືອກຕັ້ງໄດ້*

ທ່ານສາມາດລົງຄະແນນສຽງໃນບໍ່ຊ້ານີ້ໄດ້ທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນແຕ່ວັນສຸກທີ່ 23 ກັນຍາ ນອກນັ້ນທ່ານຍັງສາມາດສະໝັກຂໍບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນເລືອກຕັ້ງໄດ້ ສົ່ງໃຫ້ທ່ານທາງໄປສະນີໄດ້

ຊອກຫາຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຫຼືຂໍບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນເລືອກຕັ້ງໄດ້ ໃຫ້ໄປທີ່ mnvotes.org

***ຈົດໝາຍສຳລັບນາຍຈ້າງຂອງທ່ານ***
*ໄປທີ່ mnvotes.org ເພື່ອຊອກຫາຈົດໝາຍອະທິບາຍສິດທີ່ຢຸດເຮັດວຽກເພື່ອໄປລົງຄະແນນສຽງ ທີ່ທ່ານສາມາດໃຫ້ນາຍຈ້າງຂອງທ່ານ*